ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຜ–ຟຟລ ຮັບລາງວັນ Best Deal & Solution Awards 2018

ບໍລິສັດ ຜະລິດ-ໄຟຟ້າລາວມະຫາຊົນ (ຜ-ຟຟລ) ໄດ້ຮັບລາງວັນ Best Deal & Solution Awards 2018, ໃນ ສາຂາ Best Foreign Currency Sovereign Bond Deal In Southeast Asia 2018 ທີ່ ການອອກຮຸ້ນກູ້ສະກຸນເງິນຕ່າງປະເທດດີເດັ່ນ ໃນອາຊີຕາເວັນອອກສຽງໃຕ້ ປະຈໍາປີ 2018 ເຊິ່ງຈັດໂດຍວາລະສານ Alpha Southeast Asia ເຊິ່ງເປັນວາລະສານຊັ້ນນໍາ ທີ່ໄດ້ຮັບຄວາມໜ້າເຊື່ອຖືໃນແວດວົງການເງິນ ຕະຫຼາດທຶນຂອງພູມິພາກອາຊີຕາເວັນອອກສຽງໃຕ້

ພິທີມອບ-ຮັບລາງວັນດັ່ງກ່າວ ໄດ້ຈັດຂຶ້ນທີ່ນະຄອນຫຼວງ ກົວລາລໍາເປີ ປະເທດມາເລເຊຍ ໃນວັນທີ 21 ກຸມພາ 2019 ໂດຍແມ່ນ ທ່ານ ຄໍາໃບ ຫຼວງໄຊ ຫົວໜ້າພະແນກບັນຊີ ຕາງໜ້າ ຜ-ຟຟລ ພ້ອມດ້ວຍ ຕາງໜ້າ ຈາກທະນາຄານ ແລະ ບັນດາບໍລິສັດຊັ້ນນໍາຈາກປະເທດອາຊີ ລວມ 29 ບໍລິສັດ ຈາກ ອິນໂດເນເຊຍ ໄທ ມາເລເຊຍ ສິງກະໂປ ແລະ ປະເທດລາວ ຮ່ວມຮັບລາງວັນທັງໝົດ 39 ລາງວັນ ໃນຄັ້ງນີ້.







ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.